ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

## ກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ II ປະຈຳປີ 2022




ໃນຕອນເຊົ້າຂອງວັນທີ 05 ກັນຍາ 2022 ທີ່ຫ້ອງປະຊຸມຊັ້ນ V ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຈັດກອງປະຊຸມຂຶ້ນ ໂດຍການໃຫ້ກຽດເປັນປະທານໂດຍ ທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ; ໂດຍມີຮອງປະທານ, ຄະນະກຳມະການ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2022; ໄດ້ຮັບຟັງລາຍງານການເຄື່ອນໄຫວວຽກງານຂອງ ສຄຄຊ ປະຈຳ 06 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 06 ເດືອນທ້າຍປີ ໂດຍ ທ່ານ ນ. ຟອງຈິນດາ ແສງສຸລິວົງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ). ພ້ອມດຽວກັນນັ້ນ ທ່ານ ສຸພັກ ຖິ່ນໄຊພອນ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ໄດ້ລາຍງານສະພາບການເຄື່ອນໄຫວພົ້ນເດັ່ນຂອງ ຕລຊລ ປະຈຳ 06 ເດືອນຕົ້ນປີ ແລະ ແຜນການ 06 ເດືອນທ້າຍປີ 2022.

ທ່ານປະທານ ຄຄຊ ໄດ້ຕີລາຄາສູງຕໍ່ຜົນກອງປະຊຸມໃນຄັ້ງນີ້ ແມ່ນໄດ້ເປີດຂຶ້ນທ່າມກາງທີ່ທົ່ວພັກ, ທົ່ວລັດ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງເຊື່ອມຊຶມການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ແຜນພັດທະນາເສດຖະກິດສັງຄົມ 05 ປີ ແຫ່ງຊາດ ຄັ້ງທີ IX. ສະເພາະຂະແໜງການທະນາຄານຂອງພວກເຮົາແມ່ນເລັ່ງໃສ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ-ເງິນຕາ (2021-2023). ຄຽງຄູ່ກັບການພັດທະນາຕະຫຼາດທຶນ ກໍ່ຄືການຜັນຂະຫຍາຍຈັດຕັ້ງປະຕິບັດ ບັນດາແຜນງານ-ໂຄງການພັດທະນາຕະຫຼາດທຶນ 05 ປີ (2021-2025). ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ຍົກສູງຄວາມຮັບຜິດຊອບໃນການປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ມີລັກສະນະສ້າງສັນ ເຮັດໃຫ້ກອງປະຊຸມໃນຄັ້ງນີ້ ດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ໄດ້ກຳນົດໄວ້.




**ຮູບ ແລະ ພາບ ໂດຍ ນ. ທິດສະບາ ທຳມະວົງສີງ**

*ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ*